ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການສັ່ງຈ່າຍແຊັກບໍ່ມີເງິນ

ໃນປະຈຸບັນການຊໍາລະສະສາງໃນຮູບແບບການສັ່ງຈ່າຍດ້ວຍແຊັກ ແມ່ນມີການນໍາໃຊ້ຢ່າງກ້ວາງຂວາງໃນການຊໍາລະສະສາງດັ່ງທີ່ຮູ້ກັນແລ້ວວ່າ: ແຊັກ ແມ່ນເອກະສານທາງການເງິນ, ທີ່ມີຄຸນຄ່າຄືກັບເງິນສົດ, ສາມາດນໍາໃຊ້ເປັນເຄື່ອງມືໃນການແລກປ່ຽນສິນຄ້າ, ຊໍາລະຄ່າສິນຄ້າ, ຄ່າບໍລິການ, ຊໍາລະໜີ້ສິນ ແລະ ອື່ນໆ ໃນສັງຄົມ. ນອກນີ້ຍັງໄດ້ມີການສັ່ງຈ່າຍແຊັກລ່ວງໜ້າເຂົ້າໃນການຄໍ້າປະກັນການກູ້ຢືມເງິນຕ່າງໆສະດວກສະບາຍ ແລະ ປອດໄພກວ່າການຊໍາລະດ້ວຍເງິນສົດ, ແຕ່ຄຽງຄູ່ກັນນັ້ນກໍ່ມີປະກົດການຫຍໍ້ທໍ້ໃນການນໍາໃຊ້ແຊັກເປັນຕົ້ນແມ່ນການສັ່ງຈ່າຍແຊັກທີ່ບໍ່ມີເງິນພຽງພໍໃນບັນຊີຊຶ່ງສ້າງບັນຫາ, ຄວາມເສຍຫາຍໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນໃນສັງຄົມ.

ກ່ຽວກັບການນໍາໃຊ້ແຊັກ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມລະບຽບການຂອງກົດໝາຍ ດັ່ງຂໍ້ມູນລຸ່ມນີ້:

ການສັ່ງຈ່າຍແຊັກແຕ່ລະຄັ້ງຕ້ອງປະຕິບັດໃຫ້ຄົບຖ້ວນຕາມເນື້ອໃນອົງປະກອບ, ຕາມມາດຕາ 8 ຂອງດໍາລັດວ່າດ້ວຍແຊັກ, ສະບັບເລກທີ 386/ລບ, ວັນທີ 27.10.2014. ແຕ່ໃນກໍລະນີການສັ່ງຈ່າຍແຊັກທີ່ບໍ່ຄົບອົງປະກອບໃດໜຶ່ງໂດຍສະເພາະໃນການສັ່ງຈ່າຍທີ່ບໍ່ມີເງິນພຽງພໍໃນບັນຊີດ້ວຍຮູບການຈິງໃຈ ຫຼື ເຈດຕະນາເພື່ອຫຼອກລວງຊຶ່ງສ້າງຄວາມເສຍຫາຍ ແລະ ອັບປະໂຫຍດໃຫ້ແກ່ຜູ້ຮັບແຊັກນັ້ນ, ຜູ້ສັ່ງຈ່າຍແຊັກຈະມີຄວາມຮັບຜິດຊອບທາງອາຍາ.

**ຍົກຕົວຢ່າງການສັ່ງຈ່າຍແຊັກບໍ່ມີເງິນ**: ບໍລິສັດ (ກ) ໄດ້ຂຽນແຊັກເພື່ອສັ່ງຈ່າຍເງິນໃຫ້ແກ່ ບໍລິສັດ (ຂ) ເພື່ອຊໍາລະຄ່າວັດສະດຸກໍ່ສ້າງ, ເປັນເງິນຈໍານວນ 80.000.000 ກີບ ເມື່ອບໍລິສັດ (ຂ) ມາຂໍເບີກເງິນຈາກຜູ້ອອກແຊັກ ແຕ່ເຫັນວ່າຍອດເງິນໃນບັນຊີຂອງ ບໍລິສັດ (ກ) ມີຍອດເງິນພຽງແຕ່ຈໍານວນ 50.000.000 ກີບ ຊຶ່ງບໍ່ກົງກັບຈໍານວນຕົວເລກທີ່ປາກົດຢູ່ໃນແຊັກດັ່ງນັ້ນ, ທາງທະນາຄານ ຈຶ່ງບໍ່ສາມາດເບີກຖອນເງິນໃຫ້ໄດ້ຕາມລະບຽບການຂອງທະນາຄານ, ຊຶ່ງຂັດຕໍ່ມາດຕາ 33 ຂອງດໍາລັດວ່າດ້ວຍແຊັກ, ສະບັບເລກທີ 386/ລບ, ວັນທີ 27.10.2014;

ບຸກຄົນ ຫຼື ນິຕິບຸກຄົນໃດຫາກໄດ້ສັ່ງຈ່າຍແຊັກທີ່ບໍ່ມີເງິນພຽງພໍໃນບັນຊີ ຫຼື ໃຊ້ແຊັກເກີນຈໍານວນເງິນທີ່ຕົນໄດ້ຝາກຢູ່ທະນາຄານ ຫຼື ຊື້ຂາຍ ແລະ ແລກປ່ຽນແຊັກ, ປອມແປງແຊັກ ຫຼື ຮູບແບບອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະມີຄວາມຮັບຜິດຊອບຕໍ່ກົດໝາຍອາຍາ, ມາດຕາ 151, ສະບັບເລກທີ 12/ສພຊ, 9 ພະຈິກ 2005, ພ້ອມຈະໄດ້ຖືກປັບໄໝຕາມລະບຽບການຂອງທະນາຄານ;

ສະນັ້ນ, ເຖິງວ່າການນໍາໃຊ້ແຊັກສ້າງຄວາມສະດວກໃນການຊໍາລະສະສາງກໍ່ຕາມ ແຕ່ຜູ້ສັ່ງຈ່າຍຍັງຕ້ອງມີຄວາມຮັບຜິດຊອບຕໍ່ຜູ້ຮັບເງິນ ຫຼື ຜູ້ຮັບແຊັກ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ. ດັ່ງນັ້ນ, ທ່ານຜູ້ນໍາໃຊ້ແຊັກຕ້ອງມີຄວາມລະມັດລະວັງ ແລະ ມີສະຕິຫຼາຍຂຶ້ນ ເພື່ອບໍ່ສ້າງຄວາມເສຍຫາຍ ແລະ ອັບປະໂຫຍດໃຫ້ບຸກຄົນ ແລະ ນິຕິບຸກຄົນອື່ນ.

**#ຂຽນໂດຍ: ນ. ສອນໄຊ ສີຫາເທບ, ກົມນິຕິກໍາ ທະນາຄານແຫ່ງ ສປປ ລາວ.**

## ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ